**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ຫ້ອງການ ເລກທີ 27 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 30 ມັງກອນ 2026

# ແຈ້ງການ

**ເຖິງ: ບັນດາທະນາຄານທຸລະກິດ, ຫ້າງຮ້ານຕ່າງໆ.**

**ເລື່ອງ: ການຈຳໜ່າຍຫຼຽນທີ່ລະນຶກ 3 ວັນປະຫວັດສາດ ຂອງພັກ-ຂອງຊາດ ໃນປີ 2025.**

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 66/ສພຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການທະນາຄານແຫ່ງ ສປປ ລາວ ສະບັບເລກທີ 444/ທຫລ, ລົງວັນທີ 14 ມິຖຸນາ 2022;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 155/ຫສນຍ, ລົງວັນທີ 06 ພະຈິກ 2025.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ:ເພື່ອເປັນການສະເຫຼີມສະຫຼອງ 3 ວັນປະຫວັດສາດໃນປີ 2025, ລັດຖະບານ ໄດ້ອະນຸມັດໃຫ້ທະນາຄານແຫ່ງ ສປປ ລາວ ຜະລິດ ແລະ ຈຳໜ່າຍ ຫຼຽນທີ່ລະນຶກ 3 ວັນປະຫວັດສາດ ຂອງພັກ-ຂອງຊາດ ໃນປີ 2025. ສະນັ້ນ, ເພື່ອເຮັດໃຫ້ການຈຳໜ່າຍຫຼຽນ ດັ່ງກ່າວ ສາມາດໃຫ້ລູກຄ້າສາມາດຊື້ໄດ້ຢ່າງທົ່ວເຖິງ ຈຶ່ງແຈ້ງມາຍັງທ່ານ ທີ່ມີຄວາມສົນໃຈ ແລະ ຢາກເປັນຕົວແທນ, ດັ່ງລາຍລະອຽດລຸ່ມນີ້:

1. **ຮູບແບບ ຂອງຫຼຽນທີ່ລະນຶກ 3 ວັນປະຫວັດສາດ:**

- **ດ້ານໜ້າ:** ມີຮູບທຸງຊາດລາວ, ຮູບທຸງພັກປະຊາຊົນປະຕິວັດລາວ, ຮູບປະທານ ໄກສອນ ພົມວິຫານ ແລະ ມີຄຳວ່າ **"3 ວັນປະຫວັດສາດ ປີ 2025"** ຢູ່ດ້ານລຸ່ມ;
- **ດ້ານຫຼັງ:** ມີເຄື່ອງໝາຍຊາດ, ມີຄຳວ່າ **"ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ"** ຢູ່ດ້ານເທິງ ແລະ ຄຳວ່າ **"ຄົບຮອບ 50 ປີ"** ຢູ່ດ້ານລຸ່ມ.

ຫຼຽນທີ່ລະນຶກ 3 ວັນປະຫວັດສາດ ຂອງພັກ-ຂອງຊາດ ໃນປີ 2025 ປະກອບມີ 03 ປະເພດຄື: ຫຼຽນໂລຫະປະສົມເຄືອບສີ, ຫຼຽນເງິນ ແລະ ຫຼຽນຄຳ, ດັ່ງມີລາຍລະອຽດລຸ່ມນີ້:

| ລ/ດ | ຮູບແບບ | | ລັກສະນະເຕັກນິກ |
|---|---|---|---|
| | ດ້ານໜ້າ | ດ້ານໜ້າ | |
| 1 |  |  | **ຫຼຽນໂລຫະປະສົມເຄືອບສີ**<br>- ຂະໜາດ 39 ມິນລີແມັດ;<br>- ນ້ຳໜັກ 18 ກຼາມ. |

| | | | |
|---|---|---|---|
| 2 |  |  | **ຫຼຽນເງິນບໍລິສຸດ 99.99%**<br>- ຂະໜາດ 39 ມິນລີແມັດ;<br>- ນ້ຳໜັກ 1 ອອນ ຫຼື 31.10 ກຼາມ. |
| 3 |  |  | **ຫຼຽນເງິນບໍລິສຸດ 99.99%**<br>- ຂະໜາດ 33 ມິນລີແມັດ;<br>- ນ້ຳໜັກ 1/2 ອອນ ຫຼື 15.55 ກຼາມ. |
| 4 |  |  | **ຫຼຽນຄຳບໍລິສຸດ 99.99%**<br>- ຂະໜາດ 39 ມິນລີແມັດ;<br>- ນ້ຳໜັກ 1 ອອນ ຫຼື 31.10 ກຼາມ. |

**2. ການຈຳໜ່າຍ.**

1. ຫຼຽນໂລຫະປະສົມເຄືອບສີ ຈຳໜ່າຍໃນລາຄາ 50,000 ກີບ/ຫຼຽນ;

2. ຫຼຽນເງິນ ແລະ ຫຼຽນຄຳ ບໍລິສຸດ 99.99% ຈຳໜ່າຍໃນລາຄາປະຈຳວັນ ຕາມການກຳນົດ ຂອງ ທະນາຄານແຫ່ງ ສປປ ລາວ;

**ສຳລັບຕົວແທນຈຳໜ່າຍຫຼຽນທີ່ລະນຶກ 3 ວັນປະຫວັດສາດ ຂອງພັກ-ຂອງຊາດ ໃນປີ 2025 ແມ່ນຈະຮັບຜົນຕອບແທນຕາມຈຳນວນທີ່ຈະຂາຍ ຫຼື ຕາມການສັ່ງຊື້ຂອງລູກຄ້າ ແລ້ວປະສານຫາກົມພິມຈຳໜ່າຍ ນຳຫຼຽນຕົວຈິງໄປໃຫ້ລູກຄ້າ, ໂດຍແມ່ນຈະຫັກຜົນຕອບແທນໃຫ້ 1% ຂອງກຳໄລ ຕາມຈຳນວນທີ່ຂາຍຕົວຈິງ;**

3. ສະຖານທີ່ຈຳໜ່າຍ, ພາກສ່ວນໃດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນໄດ້ທີ່: ກົມພິມຈຳໜ່າຍ ທະນາຄານແຫ່ງ ສປປ ລາວ ນະຄອນຫຼວງວຽງຈັນ (856-20) 5565 8599; 020 5193 5694 ແລະ ສາຂາ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ① ແຂວງ ອຸດົມໄຊ (856-81) 260012, ② ແຂວງຫຼວງພະບາງ (856-71) 260700, ③ ແຂວງຊຽງຂວາງ (856-61) 260030, ④ ແຂວງສະຫວັນນະເຂດ (856-41) 260305 ແລະ ⑤ ແຂວງປະຈຳປາສັກ 031 214129 ໃນໂມງ ລັດຖະການນັບແຕ່ມື້ອອກແຈ້ງການສະບັບນີ້ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທະນາຄານທຸລະກິດ, ຫ້າງຮ້ານຕ່າງໆ ເພື່ອຊາບ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ພານຸສັກ ແກ່ນວົງພະຈັນ**